**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ

ເລກທີ 225 /ສວສ

ນະຄອນຫຼວງວຽງຈັນ, ວັນທີ 14 NOV 2025

# ໜັງສືແຈ້ງການ

ເຖິງ: ຜູ້ທີ່ສົນຕ້ອງການສະໝັກສອບເສັງລະດັບຊາດ ສຳລັບວິຊາຊີບເພສັດຊະກຳ ຄັ້ງທີ 2

ເລື່ອງ: ການສະໝັກສອບເສັງລະດັບຊາດ ສຳລັບວິຊາຊີບເພສັດຊະກຳ ຄັ້ງທີ 2

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ສະບັບເລກທີ 1932/ສທ, ລົງວັນທີ 17 ກໍລະກົດ 2024;
- ອີງຕາມ ວ່າດ້ວຍການອະນຸມັດເປີດການສອບເສັງລະດັບຊາດສຳລັບວິຊາຊີບເພສັດຊະກອນ ສະບັບເລກທີ 2831/ສວສ, ລົງວັນທີ 04 ພະຈິກ 2025;

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ວ່າ: ສະພາຄຸ້ມຄອງວິຊາຊີບເພສັດຊະກຳ ຈະໄດ້ຈັດການສອບເສັງລະດັບຊາດ ສຳລັບເພສັຊກອນ ຄັ້ງທີ 2 ຂຶ້ນ ໃນວັນທີ 09 ເດືອນ ທັນວາ ປີ 2025 ຢູ່ທີ່ ຄະນະເພສັຊສາດ, ມະຫາວິທະຍາໄລ ວິທະຍາສາດສຸຂະພາບ (ມວສ). ດັ່ງນັ້ນ, ຈຶ່ງຂໍແຈ້ງໃຫ້ຜູ້ທີ່ຮຽນຈົບເພສັຊສາດ ທັງພາຍໃນ ແລະ ຕ່າງປະເທດ ທີ່ຮຽນຈົບ ແຕ່ປີ 2024 ເປັນຕົ້ນມາ ທີ່ຍັງບໍ່ທັນໄດ້ສອບເສັງ ແລະ ສອບເສັງບໍ່ຜ່ານ ທີ່ບໍ່ທັນໄດ້ຮັບໃບປະກອບວິຊາຊີບເພສັດຊະກຳ ໃຫ້ສະໝັກສອບເສັງ ແລະ ປະຕິບັດຕາມຂັ້ນຕອນລາຍລະອຽດ ດັ່ງລຸ່ມນີ້:

1. ສະໝັກສອບເສັງດ້ວຍການດາວໂຫຼດ ແບບຟອມຄຳຮ້ອງຜ່ານທາງອອນລາຍ ໄດ້ທີ່: https://hpc.gov.la/la/pharmacist/examination ຫຼື ພິວພັນເອົາແບບຟອມສະໝັກໄດ້ ທີ່ ຫ້ອງການສະພາຄຸ້ມຄອງວິຊາຊີບສາທາລະນະສຸກ (ຕຶກສອງຊັ້ນດ່ໜ້າ ຕຶກໃໝ່ 6 ຊັ້ນຂອງກະຊວງສາທາລະນະສຸກ);
2. ຜູ້ທີ່ສະໝັກສອບເສັງຈະຕ້ອງຂຽນຟອມສະໝັກສອບເສັງ ແລະ ລົງທະບຽນທາງອອນລາຍ ຜ່ານ QR Code (ຖ້າບໍ່ລົງທະບຽນ ຈະບໍ່ມີລາຍຊື່ສອບເສັງ);
3. ສົ່ງແບບຟອມຄຳຮ້ອງສະໝັກສອບເສັງ ແຕ່ ວັນທີ 17 ຫາ 28 ເດືອນ ທັນວາ ປີ 2025 ທີ່ ຫ້ອງການສະພາຄຸ້ມຄອງວິຊາຊີບສາທາລະນະສຸກ (ຕຶກສອງຊັ້ນດ່ໜ້າ ຕຶກໃໝ່ 6 ຊັ້ນຂອງກະຊວງສາທາລະນະສຸກ);

4. ໃຫ້ຮັບຟັງການປະຖົມນິເທດ ວັນທີ 8 ທັນວາ 2025 ໃຫ້ເຂົ້າຮ່ວມຟັງປະຖົມນິເທດຢູ່ ຫ້ອງປະຊຸມໃຫຍ່ ວິທະຍາເຂດ ເພຍວັດ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ;
5. ຄ່າລົງທະບຽນສະໝັກສອບເສັງ ຈຳນວນ 350,000 ກີບ/ຄົນ (ເງິນສົດ) ເຊິ່ງຈະຕ້ອງຈ່າຍພ້ອມ ຕອນສົ່ງພອມ ຄຳຮ້ອງສະໝັກສອບເສັງ;
6. ຜູ້ສອບເສັງ ຈະຕ້ອງກະກຽມອຸປະກອນໃນການສອບເສັງດ້ວຍຕົນເອງມາເຂົ້າຫ້ອງສອບເສັງ ເຊັ່ນ: ສໍດຳ 2B, ຢາງລຶບ, ອຸປະກອນແຫຼມສໍ ແລະ ຈັກຄິດໄລ່.

ປະທານ

ສຈ ດຣ ຈັນເພັງ ທຳມະວົງ

ສາມາດຕິດຕໍ່ປະສານງານ ໂທ ແລະ ວອດແອັບ:

1. ອຈ ສຳເຫຼັດ 58 894 289
2. ບຸນປະສິດ 59 868 071